ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 13 ຫາ 17 ພຶດສະພາ 2024



ກອງປະຊຸມຄະນະກຳມະການຮັບຜິດຊອບໂຄງການປັບປຸງຊີວິດການເປັນຢູ່ ຂອງຊາວກະສິກອນ
ເມືອງ ນາຊາຍທອງ ແລະ ເມືອງ ສັງທອງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມຄະນະກຳມະການຮັບຜິດຊອບໂຄງການ ປັບປຸງຊີວິດການເປັນຢູ່ ຂອງຊາວກະສິກອນ ເມືອງ ນາຊາຍທອງ ແລະ ເມືອງ ສັງທອງ

ໃນຕອນເຊົ້າວັນທີ 14 ພຶດສະພາ 2024 ສູນພັດທະນາ ແລະ ບໍລິການດ້ານກະເສດ ຫ້ວຍຊອນ-ຫ້ວຍຊົ້ວ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດກອງປະຊຸມຄະນະກຳມະການຮັບຜິດຊອບໂຄງການ ປັບປຸງຊີວິດການເປັນຢູ່ ຂອງຊາວກະສິກອນ ເມືອງ ນາຊາຍທອງ ແລະ ເມືອງ ສັງທອງ ນະຄອນຫຼວງວຽງຈັນ ຂຶ້ນຢູ່ທີ່ຫ້ອງປະຊຸມຂອງຕົນ ໂດຍການເປັນປະທານຮ່ວມຂອງ ທ່ານ ດວງຕາວັນ ສີສົມບັດ ຫົວໜ້າສູນພັດທະນາ ແລະ ບໍລິການດ້ານກະເສດ ຫ້ວຍຊອນ-ຫ້ວຍຊົ້ວ, ທ່ານ ນ. ອະລຸນີ ໄຂ ຮອງອະທິບໍດີ ກົມຄວາມຮ່ວມມືລະຫວ່າງປະເທດ, ກະຊວງການຕ່າງປະເທດ ຣາຊະອະນາຈັກໄທ. ພ້ອມນີ້ມີບັນດາພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມ.

ທ່ານ ດວງຕາວັນ ສີສົມບັດ ຫົວໜ້າສູນພັດທະນາ ແລະ ບໍລິການດ້ານກະເສດ ຫ້ວຍຊອນ-ຫ້ວຍຊົ້ວ ກ່າວມີຄຳເຫັນວ່າ: ເພື່ອເຮັດໃຫ້ປະຊາຊົນໃນເຂດພື້ນທີ່ໂຄງການສາມາດຄ້ຳປະກັນທາງດ້ານ ສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຊາວກະສິກອນມີລາຍຮັບ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນເທື່ອລະກ້າວ. ສະນັ້ນ ກອງປະຊຸມຄະນະກຳມະການຮັບຜິດຊອບໂຄງການ ຄັ້ງນີ້ ເປັນໂຄງການໜຶ່ງທີ່ມີຄວາມໝາຍຄວາມສຳຄັນ ຊຶ່ງເປັນໂຄງການທີ່ໄດ້ຮັບທຶນ ແລະ ການສະໜັບສະໜູນຈາກກົມຄວາມຮ່ວມມືລະຫວ່າງປະເທດ ແລະ ສຳນັກງານ ກປຮ, ສະຖານທູດໄທ ປະຈຳລາວ ໂດຍຜູ້ຊ່ຽວຊານຈາກກົມກ່ຽວຂ້ອງຂອງ ກະຊວງກະເສດ ແລະ ສະຫະກອນ ແຫ່ງຣາຊະອະນາຈັກໄທ ທີ່ໃຫ້ການສະໜັບສະໜູນດ້ານຄຳແນະນຳ, ແລກປ່ຽນປະສົບການຕົວຈິງ ທີ່ມີຜົນສຳເລັດແລ້ວ

ມາຖ່າຍທອດ ພ້ອມທັງນຳເອົາເຕັກນິກ, ນະວັດຕະກຳອັນໃໝ່ ດ້ານການປູກ-ການລ້ຽງ ໃຫ້ແກ່ຊາວກະສິກອນຕົວແບບ ໃນ 100 ຄອບຄົວ ທັງ 02 ເມືອງຄື: ເມືອງນາຊາຍທອງ ແລະ ເມືອງ ສັງທອງ ໄດ້ຮັບຮູ້ ແລະ ສາມາດນຳໄປປະຕິບັດຕົວຈິງໄດ້ດ້ວຍຕົນເອງ ແລະ ກາຍເປັນຕົວແບບທີ່ດີ ສາມາດຖ່າຍທອດຄວາມຮູ້ໃຫ້ແກ່ຊາວກະສິກອນຜູ້ອື່ນໆອີກ ໃຫ້ສາມາດຜະລິດເປັນສິນຄ້າ ສ້າງລາຍຮັບໃຫ້ກັບຄອບຄົວ. ໃນທີ່ປະຊຸມ ໄດ້ຮັບຟັງການນຳສະເໜີການຈັດຕັ້ງປະຕິບັດວຽກງານກິດຈະກຳຂອງໂຄງການໃນແຕ່ລະດ້ານເຊັ່ນ: ວຽກງານການປະມົງ-ລ້ຽງສັດ ແລະ ວຽກງານດ້ານຊົນລະປະທານ ຈາກຜູ້ຊ່ຽວຊານປະຈຳໂຄງການ ແລະ ໃນຕອນທ້າຍກອງປະຊຸມ ໄດ້ມີການສົ່ງມອບໂຄງການປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນ ເມືອງນາຊາຍທອງ ແລະ ເມືອງ ສັງທອງ, ນະຄອນຫຼວງວຽງຈັນ ໃຫ້ສູນພັດທະນາ ແລະ ບໍລິການດ້ານກະເສດ ຫ້ວຍຊອນ-ຫ້ວຍຊົ້ວ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ສືບຕໍ່ຮັບຜິດຊອບ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານໃຫ້ມີຄວາມຍືນຍົງໃນຕໍ່ໜ້າ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;